# ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວມໍລະດົກໂລກວັດພູ ຈຳປາສັກ ແບບຍືນຍົງ

**ທ່ານ ຈອນນີ ຕັນ[1], ທ່ານ ປອ ຂັນທະລີ ພິມມະເສນ[2], ທ່ານ ປທ ພອນສັກ ໂສພາ[3]**

*ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ ສປປ ລາວ*

**ບົດຄັດຫຍໍ້**

ການສຶກສາວິທະຍານິພົນ ລະດັບປະລິນຍາໂທມີຈຸດປະສົງ ເພື່ອສຶກສາລະດັບການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ ແລະ ປຽບທຽບການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ ແລະ ປັດໄຈທີ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນປະຊາກອນ ຈຳນວນ 8 ບ້ານ, ທີ່ອາໃສຢູ່ໃນຂອບເຂດບໍລິເວນທີ່ໃກ້ກັບ ສະຖານທີ່ແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ຈຳນວນທັງໝົດ 312 ຄົນ, ເຄື່ອງມືທີ່ໃຊ້ໃນການເກັບກຳລວບ ລວມຂໍ້ມູນ ແມ່ນແບບສອບຖາມ, ສະຖິຕິທີ່ໃຊ້ໃນການວິເຄາະ ຂໍ້ມູນໂປຼແກຼມສຳ ເລັດຮູບທາງສະຖິຕິ ໄດ້ແກ່: ຄ່າສ່ວນຮ້ອຍ ແລະ ຄ່າສະເລ່ຍ, Independent Samples T-test ແລະ One-way ANOVA.

ຜົນການສຶກສາພົບວ່າ ປະຊາຊົນສ່ວນໃຫຍ່ທີ່ແບບສອບຖາມ ແມ່ນເປັນເພດຊາຍ, ມີອາຍຸ 51 ປີ ຂຶ້ນໄປ, ມີລະ ດັບການສຶກສາມັດທະຍົມສຶກສາຕອນຕົ້ນ, ມີສະຖານະພາບແຕ່ງງານ, ອາຊີບສ່ວນໃຫຍ່ ເຮັດນາ ແລະ ເຮັດສວນ, ມີລາຍໄດ້ 1,000,001-1,500,000 ກີບ ແລະ ມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ຢູ່ໃນລະດັບປານກາງ ປະຊາຊົນມີລະດັບການມີສ່ວນຮ່ວມຫຼາຍທີ່ສຸດ ແມ່ນດ້ານການມີສ່ວນຮ່ວມໃນການຕັດສິນໃຈ, ຮອງລົງມາດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ, ຖັດມາດ້ານການມີສ່ວນຮ່ວມໃນການໃຊ້ປະໂຫຍດ, ຕໍ່ມາດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ, ດ້ານການມີສ່ວນຮ່ວມໃນການບຳລຸງ ແລະ ຮັກສາ, ດ້ານການມີສ່ວນຮ່ວມໃນການວາງແຜນ ແລະ ປະຊຸມປຶກສາຫາລື ແລະ ການວິເຄາະພົບວ່າ ອາຍຸ, ລະດັບການສຶກສາ ແລະ ອາຊີບ ທີ່ແຕກຕ່າງກັນມີຜົນຕໍ່ການມີສ່ວນຮ່ວມ ໃນການພັດທະນາແຫຼ່ງທ່ອງທ່ຽວ ແມ່ນແຕກຕ່າງກັນ ສ່ວນເພດ, ສະຖາ ນະພາບ ແລະ ລາຍໄດ້ສະເລ່ຍຕໍ່ເດືອນ ທີ່ແຕກຕ່າງກັນມີຜົນຕໍ່ການມີສ່ວນຮ່ວມ ໃນການພັດທະນາແຫຼ່ງທ່ອງທ່ຽວ ບໍ່ແຕກຕ່າງກັນ.

**ຄຳສັບສຳຄັນ:** ການມີສ່ວນຮ່ວມ, ຊຸມຊົນ, ການພັດທະນາແຫຼ່ງທ່ອງທ່ຽວ, ແບບຍືນຍົງ

---

*1 ຄະນະເສດຖະສາດ ແລະ ການຄຸ້ມຄອງ, ອີເມວ: Tanjohnn99@gmail.com.*

*2 ປອ ຂັນທະລີ ພິມມະເສນ, ຄະນະສຶກສາສາດ, ອີເມວ: khphimmasenh@gmail.com.*

*3 ປທ ພອນສັກ ໂສພາ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ອີເມວ: psack.sp.cu2010@gmail.com.*

# COMMUNITY PARTICIPATION IN THE DEVELOPMENT OF WAT PHU WORID HERITAGE TOURISM SITES IN A SUSTAINABIE MANNER

**Johnny Tan[1], Dr. Khanthaly PHIMMASENH[2], Phonesack SOPHA[3],**

*The faculty of Economics and Management, Champasak University, Laos*

## ABSTRACT

This Master degree's thesis : Community Participation in the Development of WatPhu World Heritage Tourism Sites in a Sustainable Manner, allocating samples and aims that contribute to the participation in the Development of WatPhu World Heritage Tourism Sites in a Sustainable Manner of the local community.

Samples are collected from 8 villagers near to the WatPhu World Heritage Tourism Sites, total 312 person, including questionnaire, statistic analyze methods with percentage, average value, Independent Samples T-test and One-way Anova.

After study, most of the collected samples are answered by male villagers, 51 years old above, graduated junior high school, marriage, working as farmer and gardener, earned 1,000,001 Kips to 1,500,000 Kips monthly, averagely at the middle range to joint Community Participation in the Development of WatPhu World Heritage Tourism Sites in a Sustainable Manner. On this Community Participation, villagers are most interested in participating in the decision-making level, follow by action-taking, follow by benefit-sharing, follow-up, evaluation, maintenance, planning, consultation. Finally, it is concluded that age, level of education and occupation would effect this study, and sex, social status and monthly earned would not.

**Keywords**

[1] Johnny TAN, Faculty of Economic and Management, Email: Tanjohnn99@gmaill.com

[2] Khanthaly PHIMMASENH, English Department, Faculty of Education, Email: khphimmasenh@gmail.com

[3] Phonsack SOPHA, Faculty of Economics and management, Email: psack.sp.cu2010@gmail.com

**1. ພາກສະເໜີ**

ສປປ ລາວ ມີທີ່ຕັ້ງເປັນຈຸດໃຈກາງທາງຜ່ານຢູ່ໃນພາກພື້ນແມ່ນ້ຳຂອງກໍຄື: ພາກພື້ນອາຊີ-ອາຄະເນ ຜ່ານການພັດທະນາ ເສດຖະກິດ-ສັງຄົມໃນຫຼາຍປີຜ່ານມາທີ່ເຮັດໃຫ້ເສດຖະກິດ ຂອງປະເທດ ມີການຂະຫຍາຍຕົວ ແລະ ມີການພົວພັນກັບບັນດາປະເທດໃນພາກພື້ນ ແລະ ສາກົນ ປະຈຸບັນການທ່ອງທ່ຽວ ຢູ່ລາວໄດ້ກາຍເປັນອຸດສາ ຫະກຳຂະໜາດໃຫຍ່ ທີ່ສາມາດສ້າງລາຍໄດ້ໃຫ້ແກ່ປະເທດ ເປັນຈຳນວນຫຼາຍ ເປັນແນວນັ້ນແລ້ວອົງການຈັດຕັ້ງ ຂອງລັດກໍ່ໄດ້ເອົາໃຈໃສ່ໃນການພັດທະນາ ການທ່ອງທ່ຽວພາຍໃນໃຫ້ດີຂຶ້ນກ່ວາເກົ່າ ໂດຍມີການຂຶ້ນແຜນມອບໝາຍໃຫ້ພະແນກ ການຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການທ່ອງທ່ຽວ ເພື່ອພັດທະນາໃຫ້ກາຍເປັນອຸດສະຫະກຳການທ່ອງທ່ຽວໃນລາວ ດັ່ງນັ້ນ, ພັກ ແລະ ລັດ ກໍ່ໄດ້ເລັງເຫັນຄວາມສຳຄັນ ຂອງການເປັນຢູ່ ຂອງປະຊາຊົນລາວ ຈຶ່ງເປັນການເອົາໃຈໃສ່ ໃນການປະຕິບັດຕາມແຜນການຂອງນະໂຍບາຍວ່າດ້ວຍ ການພັດທະນາເສດຖະກິດ-ສັງຄົມໂດຍມີເນື້ອໃນຄື: ບູລິມະສິດກ່ຽວກັບການທ່ອງທ່ຽວ ພັດທະນາໃຫ້ກາຍເປັນອຸດສະຫະກຳການທ່ອງທ່ຽວໃຫ້ເຕັມຮູບແບບ ພ້ອມກັບແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າທີ່ຢູ່ໃນທ້ອງຖິ່ນເພື່ອໃຫ້ ຫຼຸດພົ້ນອອກຈາກຄວາມທຸກຍາກ ຕາມທີ່ລັດຖະບານຄາດຄະເນວ່າ ໃຫ້ຫຼຸດພົ້ນ ຈາກຄວາມທຸກຍາກແຜນຍຸດທະສາດ ພັດທະນາການທ່ອງທ່ຽວ ຂອງ ສປປ ລາວ 2020-2025 ແລະ ໄດ້ຊ່ວຍບັນດາແຂວງ ປັບປຸງແຜນຍຸດທະສາດການທ່ອງທ່ຽວ ຂອງແຕ່ລະ ແຂວງສຳເລັດໂດຍ ພື້ນຖານໃນທົ່ວປະເທດ. ແຜນຍຸດທະສາດ ການພັດທະນາການທ່ອງ ທ່ຽວ ແຂວງ ຈຳປາສັກ (2023)

ແຂວງ ຈຳປາສັກ ແມ່ນຕັ້ງຢູ່ພາກໃຕ້ ຂອງປະເທດລາວ ທິດຕະເວັນຕົກຕິດກັບ ລາຊາອະນາຈັກໄທ ທິດໃຕ້ຕິດກັບລາຊາອະນາຈັກກຳປູເຈຍ ທິດເໜືອຕິດກັບ ແຂວງ ສາລະວັນ ແລະ ທິດຕາເວັນອອກຕິດກັບ ແຂວງ ເຊກອງ ແລະ ແຂວງ ອັດຕະປື, ແຂວງ ຈຳປາສັກ ລວມມີເນື້ອທີ່ທັງໝົດ 15.415 ກມ² ແລະ ແມ່ນ້ຳຂອງໄຫຼຈາກທິດເໜືອຜ່ານ ແຂວງ ຈຳປາສັກ ໄປຫາລາຊາອະນາຈັກ ກຳປູເຈຍ ແລະ ບາງສ່ວນເປັນຊາຍແດນຕິດກັບລາຊາອະນາຈັກໄທ, ແຂວງ ຈຳປາສັກ ລວມມີ 10 ຕົວເມືອງ ຄື: ນະຄອນປາກເຊ, ເມືອງ ຊະນະສົມບູນ, ເມືອງ ໂພນທອງ, ເມືອງ ຈຳປາສັກ, ເມືອງ ສຸຂຸມາ, ເມືອງ ມູນລະປາໂມກ, ເມືອງ ໂຂງ, ເມືອງ ປະທຸມພອນ, ເມືອງ ບາຈຽງຈະເລີນສຸກ ແລະ ເມືອງ ປາກຊ່ອງ, ໃນການສຳຫຼວດປີ 2015 ມີປະຊາກອນທັງໝົດ 694.023 ຄົນ. ລາຍງານ: ຫ້ອງການຖະແຫຼງຂ່າວ ວັດທະ ນະທຳ ແລະ ການທ່ອງທ່ຽວ ແຂວງ ຈຳປາສັກ (2022)

ແຂວງ ຈຳປາສັກ ເປັນແຂວງໜຶ່ງ ທີ່ມີຄວາມຈະເລີນກ້າວໜ້າທາງດ້ານເສດຖະກິດ-ສັງຄົມ ແລະ ເປັນສູນກາງທາງດ້ານເສດຖະກິດ - ສັງຄົມ ຂອງສີ່ແຂວງ ພາກໃຕ້ ແລະ ເປັນຈຸດເຊື່ອມຕໍ່ລະຫວ່າງລາຊາອະນາຈັກໄທ ແລະ ລາຊາອະນາຈັກ ກຳປູເຈຍ ແຂວງ ຈຳປສັກ ເປັນດິນແດນທີ່ເຕັມໄປດ້ວຍອະລິຍະທຳອັນເກົ່າແກ່ທີ່ໜ້າຄົ້ນຫາ ແລະ ທຳມະຊາດ ທີ່ສວຍສົດງົດງາມ, ທີ່ຕັ້ງພູມສັນຖານ ໄດ້ແບ່ງອອກເປັນສອງເຂດຢ່າງຊັດເຈນຄື: ເຂດທົ່ງພຽງ, ເຂດພູພຽງ ແລະ ມີທ່າແຮງທາງດ້ານການທ່ອງທ່ຽວມີສະຖານທີ່ທ່ອງທ່ຽວອັນສວຍສົດງົດງາມຫຼາຍແຫ່ງ ເປັນຕົ້ນແມ່ນ ມີວັດວາອາຮາມເກົ່າແກ່ຫຼາຍແຫ່ງ ເຊັ່ນ: ວັດພູຈຳປາສັກ, ນ້ຳຕົກຕາດຄອນພະ

ເພັງ ເຊິ່ງເປັນນ້ຳຕົກຕາດ ທີ່ໃຫຍ່ທີ່ສຸດໃນທະວີບອາຊີ, ນ້ຳຕົກຕາດສົມພະມິດ (ຫຼີ່ຜີ) ແລະ ສີພັນດອນ ໂດຍສະເພາະແມ່ນ: ດອນຄອນ ແລະ ດອນເດດ ມີຂົວເຊື່ອມຕໍ່ກັນ ເຊິ່ງໄດ້ສ້າງຂຶ້ນໃນສະໄໝອານານິ ຄົມຝຣັ່ງ.

ເມືອງ ຈຳປາສັກ ກໍ່ແມ່ນເມືອງໜຶ່ງທີ່ຂຶ້ນກັບແຂວງ ຈຳປາສັກ ທີ່ມີເນື້ອທີ່ສ່ວນໃຫຍ່ ເປັນຂອບເຂດທົ່ງພຽງທີ່ອຸດົມສົມບູນ, ມີປ່າໄມ້ທີ່ສົດຊື່ນ ແລະແຫຼ່ງນ້ຳທຳມະຊາດ ເຊິ່ງມີແຫຼ່ງທ່ອງທ່ຽວດ້ານປະຫວັດສາດວັດທະນະທຳທີ່ສຳຄັນ ເຊັ່ນ: ຜາສາດຫີນວັດພູ ເຊິ່ງເປັນມໍລະດົກໂລກແຫ່ງທີ 2 ຂອງ ສປປລາວ, ວັດພູຈຳ ປາສັກ ມີທີ່ຕັ້ງຢູ່ ເນີນພູ ພູແກ້ວເມືອງ ຈຳປາສັກ ມີໄລຍະທາງ ຈາກນະຄອນປາກເຊປະມານ 30 ກິໂລ ແມັດ ໄດ້ສ້າງຂຶ້ນໃນສະໄໝສັດຕະວັດທີ 5 ຫາ ສັດຕະວັດທີ່ 15. ເປັນຕົ້ນກຳເນີດ ຂອງອາລະຍະທຳ ຂອງຂະເໝນ ກ່ອນການປະກົດຕົວ ຂອງວັດອັງກໍຊາວຂະເໝນ ໄດ້ເຮັດໃຫ້ມັນເປັນສູນກາງທາງສາດສະໜາຕົ້ນຕໍ ຂອງພວກເຂົາ ແມ່ນອີງໃສ່ສາດສະໜາ Hindu ແລະ ເປັນຕົວແທນ ຂອງ Shiva ແລະ ການແກະສະລັກຮູບພາບທີ່ເກົ່າແກ່ ຍັງສາມາດເຫັນໄດ້ໃນທຸກມື້ນີ້, ວັດພູຈຳປາສັກ ມີລວງຍາວ 1,400 ແມັດ ຕາມແກນທິດຕາເວັນອອກ-ຕາເວັນ ຕົກ ແລະ ໄດ້ສ້າງຂຶ້ນຢູ່ເນີນພູແກ້ວ ເພື່ອເປັນບ່ອນບູຊາມີລະບົບລະບາຍນ້ຳ ແລະເສັ້ນ ທາງ. ແຜນພັດທະນາເສດ ຖະກິດ-ສັງຄົມຂອງເມືອງ ຈຳປາສັກ (2023)

ມາຮອດປັດຈຸບັນ ວັດພູຈຳປາສັກ ແມ່ນເປັນບ່ອນທ່ອງທ່ຽວແຫ່ງໜຶ່ງ ທີ່ມີທິວທັດທຳມະຊາດສະຖາປັດຕະ ຍະກຳບູຮານຄະດີທີ່ສວຍງາມ, ປະຊາຊົນຍັງເຊື່ອວ່າ ເປັນບ່ອນສັກສິດ ຫຼື ເປັນບ່ອນສັກກະລາບູຊາດັ່ງ ນັ້ນອົງການ UNESCO ຈຶ່ງໄດ້ປະກາດວັດພູຈຳປາສັກ ເປັນມໍລະໂດກໂລກໃນປີ 2001 ເຊິ່ງໄດ້ກາຍເປັນຈຸດເດັ່ນ ຂອງນັກທ່ອງທ່ຽວເພາະມີສິ່ງແປກໃໝ່ທາງ ດ້ານວັດທະນະທຳທ້ອງຖິ່ນ ພາຍຫຼັງປະກາດວັດພູເປັນມໍລະໂດກໂລກ ຈຶ່ງເຮັດໃຫ້ວັດພູ ຈຳປາສັກ ມີທ່າແຮງດຶງດູດນັກທ່ອງທ່ຽວໄດ້ເປັນຢ່າງດີ ຈຳນວນນັກທ່ອງທ່ຽວ ເພີ່ມຂຶ້ນຢ່າງຫຼວງຫຼາຍ ເຊິ່ງເປັນການສ້າງລາຍຮັບໃຫ້ແກ່ການພັດທະນາດ້ານການທ່ອງທ່ຽວ ແລະ ລາຍຮັບດັ່ງກ່າວກໍ່ຍັງເປັນທ່າແຮງໃຫ້ແກ່ການພັດທະ ນາແຫຼ່ງທ່ອງທ່ຽວແຫ່ງນີ້ໃຫ້ມີຄວາມຍືນຍົງເປັນກ້າວໆໄປ. ບົດສະຫຼູບ: ການຈັດຕັ້ງປະຕິບັດວຽກງານຖະແຫຼງຂາວ, ວັດທະນະທຳ ແລະ ການທ່ອງທ່ຽວເມືອງ ຈຳປາສັກ (2023) ນອກ ຈາກນີ້ແລ້ວ ການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູ ເຫັນວ່າ ການພັດທະນາຍັງບໍ່ທັນຮັບປະກັນໃນໄລຍະຍາວ ເພາະວ່າຍັງຂາດການມີສ່ວນຮ່ວມ ຂອງຊຸມຊົນໂດຍສະເພາະແມ່ນບັນດາພໍ່ແມ່ປະຊາຊົນທີ່ດຳລົງຊີບຢູ່ໃນເມືອງດັ່ງກ່າວ ແມ່ນຍັງບໍ່ທັນມີສ່ວນຮ່ວມໃນການພັດທະ ນາແຫຼ່ງທ່ອງທ່ຽວແຫ່ງນີ້ເທົ່າທີ່ຄວນ ດັ່ງນັ້ນ, ຜູ້ວິໄຈຈຶ່ງມີຄວາມສົນໃຈໃນການເຮັດການຄົ້ນຄວ້າວິໄຈໃນ ຫົວຂໍ້: ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວມໍລະດົກໂລກວັດພູ ຈຳປາສັກ ແບບຍືນຍົງໂດຍ ມີຈຸດປະສົງ ເພື່ອຊອກຫາສະພາບບັນຫາການມີສ່ວນຮ່ວມ ຂອງຊຸມຊົນ, ລະດັບການມີສ່ວນຮ່ວມ ຂອງຊຸມຊົນ ແລະ ຊອກຫາແນວທາງໃນການພັດທະນາໂດຍຊຸມຊົນຕ້ອງມີສ່ວນຮ່ວມ ເພື່ອຮັບປະກັນຄວາມຍືນຍົງ ຂອງແຫຼ່ງທ່ອງທ່ຽວແຫ່ງນີ້.

## 2. ຈຸດປະສົງ

2.1 ເພື່ອສຶກສາລະດັບການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ.

2.2 ເພື່ອປຽບທຽບການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ.

2.3 ເພື່ອສຶກສາປັດໄຈທີ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງ.

**3. ວິທີການຄົ້ນຄວ້າ**

ການສຶກສານີ້ແມ່ນໄດ້ນຳໃຊ້ຂໍ້ມູນປະຖົມພູມ ທີ່ໄດ້ໃຊ້ແບບສອບຖາມເປັນເຄື່ອງມືໃນການລົງສຳຫຼວດຂໍ້ມູນກັບຄົວເຮືອນຂອງປະຊາຊົນທັງ 8 ໝູ່ບ້ານຄື: ບ້ານ ວັດຫຼວງເກົ່າ, ບ້ານ ພະນອນໃຕ້, ບ້ານ ເມືອງກາງ, ບ້ານ ທາງຄົບ, ບ້ານ ໜອງສາ, ບ້ານ ໜອງວຽນ, ບ້ານ ຫ້ວຍສາຫົວ ແລະ ບ້ານ ໜອງເດີນ. ການຄັດເລືອກກຸ່ມເປົ້າໝາຍໃນການສຶກສາແມ່ນນຳໃຊ້ສູດ (Taro Yamane 1976) ເຊິ່ງມີປະຊາກອນທັງໝົດ 1.409 ຄົນ ແລະ ກຸ່ມຕົວຢ່າງທັງໝົດ 312 ຕົວຢ່າງ.

1) ສຶກສາຄົ້ນຄວ້າຕຳລາ, ເອກະສານ ແລະ ແນວຄິດທິດສະດີຕ່າງໆ ທີ່ກ່ຽວຂ່ຽວກັບ ການມີສ່ວນຮ່ວມ ໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ, ພ້ອມທັງການຄົ້ນຫາຂໍ້ມູນ ຈາກອິນເຕີເນັດ (Internet), ຖາມຂໍ້ມູນຕ່າງໆ ເພື່ອໃຫ້ໄດ້ລາຍລະອຽດໃນການສ້າງຄຳຖາມ ແລະ ປະເດັນໃນການສຳພາດ.

ຕາຕະລາງທີ 4.7: ສະແດງ ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະ ນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ແບບຍືນຍົງຈຳແນກຕາມແຕ່ລະດ້ານ

| ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ໂດຍພາບລວມ | $\bar{X}$ | S.D | ການມີສ່ວນຮ່ວມ | ອັນດັບ |
|---|---|---|---|---|
| 1. ດ້ານການມີສ່ວນຮ່ວມໃນການວາງແຜນ ແລະ ປະຊຸມປຶກສາຫາລື | 2.98 | 0.84 | ປານກາງ | 5 |
| 2. ດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ | 3.09 | 0.78 | ປານກາງ | 2 |
| 3. ດ້ານການມີສ່ວນຮ່ວມໃນການໃຊ້ປະໂຫຍດ | 3.06 | 0.80 | ປານກາງ | 3 |
| 4. ດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ | 3.05 | 0.79 | ປານກາງ | 4 |
| 5. ດ້ານການມີສ່ວນຮ່ວມໃນການບາລຸງ ແລະ ຮັກສາ | 3.05 | 0.81 | ປານກາງ | 4 |
| 6. ດ້ານການມີສ່ວນຮ່ວມໃນການຕັດສິນໃຈ | 3.12 | 0.76 | ປານກາງ | 1 |
| ລວມ | 2.88 | 0.86 | ປານກາງ | |

**9. ຜົນໄດ້ຮັບ**

ຈາກຜົນການວິເຄາະກຸ່ມຕົວຢ່າງ ຈຳນວນ 312 ຄົນ ເຫັນວ່າ: ຜູ້ຕອບແບບສອບຖາມສ່ວນໃຫ່ຍແມ່ນ ເປັນເພດຊາຍ ຈຳນວນ 203 ຄົນ, ຄິດເປັນສ່ວນຮ້ອຍ 56.06, ອາຍຸ 51 ປີ ຂຶ້ນໄປ ຈຳນວນ 131 ຄົນ ຄິດເປັນສ່ວນຮ້ອຍ 41.99, ມີລະດັບການສຶກສາ ມັດທະຍົມສຶກສາຕອນຕົ້ນ ຈຳນວນ 93 ຄົນ ຄິດເປັນສ່ວນຮ້ອຍ 29.81, ສະຖານະພາບແຕ່ງ ງານ ມີຈຳນວນ 246 ຄົນ ຄິດເປັນສ່ວນຮ້ອຍ 78.85, ອາຊີບເຮັດນາ ແລະ ເຮັດສວນ ມີຈຳນວນ 170 ຄົນ ຄິດເປັນສ່ວນຮ້ອຍ 54.49, ລາຍໄດ້ 1,000,001-1,500,000 ກີບ ມີຈຳນວນ 117 ຄົນ ຄິດເປັນສ່ວນຮ້ອຍ 37.50.

ຕາຕະລາງທີ 4.14: ສະແດງເຖິງການທົດສອບຄວາມແຕກຕ່າງ ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ທີ່ຈຳແນກຕາມເພດ

| ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ | t-test for Equality of Means | | | | | |
|---|---|---|---|---|---|---|
| | ເພດ | $\overline{X}$ | SD | T | Df | Sig |
| ດ້ານການມີສ່ວນຮ່ວມໃນການວາງແຜນ ແລະ ປະຊຸມປຶກສາຫາລື | ຊາຍ | 2.9704 | 0.8260 | 0.293 | 213 | 0.770 |
| | ຍິງ | 3.0000 | 0.8607 | | | |
| ດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ | ຊາຍ | 3.1133 | 0.7656 | -.629 | 310 | 0.529 |
| | ຍິງ | 3.0550 | 0.8032 | | | |
| ການມີສ່ວນຮ່ວມໃນການໃຊ້ປະໂຫຍດ | ຊາຍ | 3.1133 | 0.7910 | -1.494 | 310 | 0.136 |
| | ຍິງ | 2.9725 | 0.7988 | | | |
| ດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ | ຊາຍ | 3.0690 | 0.7868 | -.627 | 215 | 0.531 |
| | ຍິງ | 3.0092 | 0.8108 | | | |
| ດ້ານການມີສ່ວນຮ່ວມໃນການບຳລຸງ ແລະ ຮັກສາ | ຊາຍ | 3.0887 | 0.7973 | -1.110 | 310 | 0.267 |
| | ຍິງ | 2.9817 | 0.8387 | | | |
| ດ້ານການມີສ່ວນຮ່ວມໃນການຕັດສິນໃຈ | ຊາຍ | 2.8867 | 0.7973 | -0.3476 | 310 | 0.728 |
| | ຍິງ | 2.8532 | 0.8369 | | | |
| ລວມ | ຊາຍ | 3.1281 | 0.7402 | -0.404 | 310 | 0.686 |

ໝາຍບອກ: *, ** ແລະ *** ບົ່ງບອກເຖິງລະດັບຄວາມເຊື່ອໝັ້ນ ທາງສະຖິຕິໃນລະດັບ 90%, 95% ແລະ 99%.

ຕາຕະລາງທີ 4.26: ສະແດງເຖິງການທົດສອບປັດໃຈຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ

| **ລະດັບ** | **ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ** | $\chi^2$ | **Sig** |
|---|---|---|---|
| 1 | ເພດຂອງຜູ້ຕອບແບບສອບຖາມ | 1.165 | 0.762 |
| 2 | ອາຍຸຂອງຜູ້ຕອບແບບສອບຖາມ | 14.137 | 0.292 |
| 3 | ລະດັບການສຶກສາຜູ້ຕອບແບບສອບຖາມ | 42.89 | 0.001*** |
| 4 | ສະຖານະພາບ | 18.372 | 0.031** |
| 5 | ອາຊີບຜູ້ຕອບແບບສອບຖາມ | 25.944 | 0.011** |
| 6 | ລາຍໄດ້ | 207.048 | 0.000*** |

ໝາຍບອກ: *, ** ແລະ *** ບົ່ງບອກເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິໃນລະດັບ 90%, 95% ແລະ 99%.

## 4. ວິພາກຜົນ

ຜ່ານການທົດສອບໃນປັດໃຈ ທີ່ມີຜົນ ຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນ ການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ໃນທາງສະຖິຕິ ເຫັນວ່າ: ປັດໄຈເພດຂອງຜູ້ຕອບແບບສອບຖາມ ຈາກການທົດສອບດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ຜູ້ຊາຍ ກັບ ຜູ້ຍິງມີ, ດັ່ງນັ້ນ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 1.066 ຄ່າ Sig = 0.785, ປັດໄຈອາຍຸ ຂອງຜູ້ຕອບແບບສອບຖາມ ຈາກການທົດສອບດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ ອາຍຸສູງຂຶ້ນຈະມີຄວາມຄິດ ດັ່ງນັ້ນ, ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນ ໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກ ວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 14.137 ຄ່າ Sig =0.292, ປັດໄຈລະດັບການສຶກສາ ຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ລະດັບການສຶກສາໃນລະດັບໃດກໍ່ຕາມ ຈະມີຄວາມຄິດ ດັ່ງນັ້ນ, ປັດໄຈດ້ານລະດັບການສຶກສາ ຈຶ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 42.89 ຄ່າ Sig = 0.001, ປັດໄຈດ້ານສະຖານະພາບຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ສະຖານະພາບແຕ່ງງານແລ້ວຈະມີ ດັ່ງນັ້ນ ປັດໄຈດ້ານສະຖານະພາບ ຈຶ່ງມີຜົນຕໍ່ການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Sq uare = 38.187 ຄ່າ Sig =0.004, ປັດໄຈດ້ານອາຊີບຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິໝາຍຄວາມວ່າ: ອາຊີບຂອງຜູ້ແບບສອບຖາມ, ດັ່ງນັ້ນປັດໄຈດ້ານອາຊີບ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square =11.116 ຄ່າ Sig = 0.268, ປັດໄຈດ້ານລາຍໄດ້ ຈາກການທົດສອບດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ລາຍໄດ້ແຕກຕ່າງກັນ ດັ່ງນັ້ນ, ປັດໄຈດ້ານລາຍໄດ້ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square =22.032 ຄ່າ Sig = 0.370.

ຜ່ານການທົດສອບປັດໄຈ ທີ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ໃນທາງສະຖິຕິ ເຫັນວ່: ປັດໄຈເພດ ຂອງຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ຜູ້ຊາຍ ກັບ ຜູ້ຍິງມີ, ດັ່ງນັ້ນ, ປັດໄຈດ້ານເພດ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 2.276 ຄ່າ Sig = 0.517, ປັດໄຈອາຍຸ ຂອງຜູ້ຕອບແບບສອບຖາມ ຈາກການທົດສອບດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນໃນທາງສະຖິຕິ ໝາຍຄວາມວ່າ: ອາຍຸສູງຂຶ້ນຈະມີຄວາມຄິດ ດັ່ງນັ້ນ, ປັດໄຈດ້ານອາຍຸ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square= 7.792 ຄ່າ Sig = 0.801, ປັດໄຈລະດັບການສຶກສາ ຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ລະດັບການສຶກສາໃນລະດັບໃດກໍ່ຕາມຈະມີ ດັ່ງນັ້ນ, ປັດ

ໃຈດ້ານລະດັບການສຶກສາຈຶ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດ ທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 62.259 ມີຄ່າ Sig = 0.000, ປັດໃຈດ້ານສະຖານະພາບ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ສະຖານະພາບແຕ່ງງານແລ້ວຈະມີຄວາມ ດັ່ງນັ້ນ, ປັດໃຈດ້ານສະຖານະພາບ ຈຶ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pear son Chi-Square =18.372 ຄ່າ Sig =0.031, ປັດໃຈດ້ານອາຊີບຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ອາຊີບຂອງດັ່ງນັ້ນ, ປັດໃຈດ້ານອາຊີບ ຈຶ່ງມີຜົນຕໍ່ການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາ ແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square =23.034 ຄ່າ Sig = 0.006, ປັດໃຈດ້ານລາຍໄດ້ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ລາຍໄດ້ແຕກຕ່າງກັນ ອາດຈະບໍ່ມີຜົນດັ່ງນັ້ນ, ປັດໃຈດ້ານລາຍໄດ້ ຈຶ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 31.0 51 ຄ່າ Sig = 0.002.

## 5. ສະຫຼຸບຜົນ

ຈາກຜົນສຶກສາການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ພົບວ່າ: ປະຊາຊົນມີລະດັບຄວາມຄິດເຫັນກ່ຽວກັບ ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ໂດຍລວມ ຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 2.88, ຄ່າຜັນປ່ຽນມາດຕະຖານ 0.86, ເມື່ອພິຈາລະນາແຕ່ລະດ້ານພົບວ່າ: ປະຊາຊົນມີລະດັບການມີສ່ວນຮ່ວມຫຼາຍທີ່ສຸດ ແມ່ນດ້ານການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍເທົ່າກັບ 3.12, ຄ່າຜັນປ່ຽນມາດຕະຖານ 0.76, ຮອງລົງມາດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.09, ຄ່າຜົດດ່ຽງມາດຕະຖານ 0.78, ຖັດມາດ້ານການມີສ່ວນຮ່ວມໃນການໃຊ້ປະໂຫຍດເຊິ່ງມີຄ່າສະເລ່ຍເທົ່າກັບ 3.06, ຄ່າຜັນປ່ຽນມາດຕະຖານ 0.80, ຕໍ່ມາດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ, ດ້ານການມີສ່ວນຮ່ວມໃນການບຳລຸງ ແລະ ຮັກສາ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.05, ຄ່າຜັນປ່ຽນມາດຕະ ຖານ 0.79, 0.80, ແລະ ດ້ານການມີສ່ວນຮ່ວມໃນການວາງແຜນ ແລະ ປະຊຸມປຶກສາຫາລື ມີຄ່າສະເລ່ຍເທົ່າກັບ 2.98, ຄ່າຜັນປ່ຽນມາດຕະຖານ 0.84.

ຈາກຜົນການວິເຄາະປັດໃຈ ທີ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ຂອງປັດໃຈການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວມໍລະດົກໂລກວັດພູຈຳປາສັກ ປະກອບມີ ເພດ, ອາຍຸ, ລະດັບການສຶກສາ, ສະຖານະພາບ, ອາຊີບ ແລະ ລາຍໄດ້ເຊິ່ງຜົນການສຶກສາດັ່ງລຸ່ມນີ້:

ປັດໃຈເພດຂອງຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ: ຜູ້ຊາຍກັບ ຜູ້ຍິງມີ ດັ່ງນັ້ນ, ປັດໃຈດ້ານເພດ ຈຶ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈຳປາສັກ ເຊິ່ງມີຄ່າ Pearson Chi-Square = 1.165 ຄ່າ Sig = 0.762.

ປັດໃຈ ດ້ານອາຍຸ ຂອງຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ບໍ່ມີຄວາມສຳຄັນທາງສະຖິຕິ ໝາຍຄວາມວ່າ ອາຍຸສູງຂຶ້ນຈະມີຄວາມຄິດໃນເລື່ອງ ດັ່ງນັ້ນ, ປັດໃຈ

ດ້ານອາຍຸ ຈິ່ງບໍ່ມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ເຊິ່ງມີຄ່າ Pearson Chi-Square = 14.137 ຄ່າ Sig = 0.292.

ປັດໄຈ ດ້ານລະດັບການສຶກສາ ຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສໍາຄັນທາງສະຖິຕິ ໝາຍຄວາມວ່າ: ລະດັບການສຶກສາໃນລະດັບໃດກໍ່ຕາມ ຈະມີຄວາມຄິດ ດັ່ງນັ້ນ, ປັດໄຈດ້ານລະດັບການສຶກສາ ຈິ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກເຊິ່ງມີຄ່າ Pearson Chi-Squ are = 42.890 ຄ່າ Sig = 0.001.

ປັດໄຈ ດ້ານສະຖານະພາບ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສໍາຄັນທາງສະຖິຕິໝາຍຄວາມວ່າ: ສະຖານະພາບແຕ່ງງານແລ້ວ ຈະມີຄວາມເປັນຫວງ ດັ່ງນັ້ນ, ໃນປັດໄຈດ້ານສະ ຖານະພາບ ຈິ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ເຊິ່ງມີຄ່າ Pearson Chi-Square = 18.372 ຄ່າ Sig =0.031.

ປັດໄຈ ດ້ານອາຊີບ ຜູ້ຕອບແບບສອບຖາມ ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ ມີຄວາມສໍາຄັນທາງສະຖິຕິ ໝາຍຄວາມວ່າ: ອາຊີບຂອງຜູ້ໃດ່ັງນັ້ນ, ປັດໄຈດ້ານອາຊີບ ຈິ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ເຊິ່ງມີຄ່າ Pearson Chi-Square = 25.944 ຄ່າ Sig =0.011.

ປັດໄຈ ດ້ານລາຍໄດ້ຈາກການທົດສອບ ດ້ວຍສະຖິຕິ Chi-Sqare ພົບວ່າ: ມີຄວາມສໍາຄັນທາງສະຖິຕິ ໝາຍຄວາມວ່າ: ຜູ້ຕອບແບບສອບຖາມແຕ່ລະຄົນຈະມີລາຍໄດ້ ດັ່ງນັ້ນ, ປັດໄຈດ້ານລາຍໄດ້ ຈິ່ງມີຜົນຕໍ່ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ເຊິ່ງມີ ຄ່າ Pearson Chi-Square = 207.048 ຄ່າ Sig =0.000.

ຈາກຜົນສຶກສາ ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ພົບວ່າ: ປະຊາຊົນມີລະດັບຄວາມຄິດເຫັນກ່ຽວກັບ ການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາແຫຼ່ງທ່ອງທ່ຽວ ມໍລະດົກໂລກວັດພູຈໍາປາສັກ ໂດຍລວມ ຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍເທົ່າກັບ 2.88, ຄ່າຜັນປ່ຽນມາດຕະຖານ 0.86, ເມື່ອພິຈາລະນາແຕ່ລະດ້ານພົບວ່າ: ປະຊາຊົນມີລະດັບການມີສ່ວນຮ່ວມຫຼາຍທີ່ສຸດ ແມ່ນດ້ານການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍເທົ່າກັບ 3.12, ຄ່າຜັນປ່ຽນມາດຕະຖານ 0.76, ຮອງລົງມາດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.09, ຄ່າຜິດດ່ຽງມາດຕະຖານ 0.78, ຖັດມາດ້ານການມີສ່ວນຮ່ວມໃນການໃຊ້ປະໂຫຍດ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.06, ຄ່າຜັນປ່ຽນມາດຕະຖານ 0.80, ຕໍ່ມາດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ, ດ້ານການມີສ່ວນຮ່ວມໃນການບໍາລຸງ ແລະ ຮັກສາ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.05, ຄ່າຜັນປ່ຽນມາດຕະ ຖານ 0.79, 0.80, ແລະ ດ້ານການມີສ່ວນຮ່ວມໃນການວາງແຜນ ແລະ ປະຊຸມປຶກສາຫາລື ມີຄ່າສະເລ່ຍເທົ່າກັບ 2.98, ຄ່າຜັນປ່ຽນມາດຕະຖານ 0.84.

### 6. ຄວາມຮູ້ບຸນຄຸນ

ການສຶກສາຄົ້ນຄວ້າຮໍ່າຮຽນ ໃນລະດັບປະລິນຍາໂທ ສາຂາການພັດທະນາຊຸມຊົນແບບຍືນຍົງ ສໍາເລັດໄປດ້ວຍດີ, ຂ້າພະເຈົ້າຂໍສະແດງຄວາມຮູ້

ບຸນຄຸນ ແລະ ຂໍຂອບໃຈ ເປັນຢ່າງສູງມາຍັງ ມະຫາວິທະຍາໄລຈໍາປາສັກດ້ວຍສະເພາະແມ່ນ ຄະນະເສດຖະສາດ ແລະ ການຄຸ້ມຄອງ, ບັນດາ ອາຈານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງໃນການໃຫ້ ຄວາມຮູ້ ແລະ ທິດຊີ້ນໍາໃນການສຶກສາ. ໂດຍ ສະເພາະແມ່ນ ທ່ານ ປອ ບຸນມີ ພອນສະຫວັນ ອະທິການບໍດີມະຫາວິທະຍາໄລ ຈໍາປາສັກ ທີ່ໃຫ້ ໂອກາດຂ້າພະເຈົ້າໄດ້ສຶກສາຄົ້ນຄວ້າ ໃນລະດັບ ປະລິນຍາໂທ ສາຂາພັດທະນາຊຸມຊົນແບບຍືນຍົງ ຊຸດນີ້.

ຕໍ່ຈາກນີ້, ຂ້າພະເຈົ້າ ຂໍສະແດງຄວາມຮູ້ ບຸນຄຸນມາຍັງ ທ່ານ ປອ ບຸນຖົມ ສີສຸມັງ ຄະນະບໍດີ ເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈໍາປາສັກ. ນອກຈາກນີ້ ຂ້າພະເຈົ້າຂໍສະແດງຄວາມ ຮູ້ບຸນຄຸນເປັນພະເສດ ມາຍັງ ທ່ານ ປອ ຂັນທະລີ ພົມມະເສນ ທີ່ຕິດຕາມ ໃຫ້ທິດຊີ້ນໍາ ໃນການ ຄົ້ນຄວ້າ, ແກ້ໄຂ ແລະ ຄວາມຄິດເຫັນຕໍ່ບົດວິທະ ຍະນິພົນ ຂອງຂ້າພະເຈົ້າຈົນປະສົບຄວາມສໍາເລັດໄປ ດ້ວຍດີ ແລະ ຂໍສະແດງຄວາມຮູ້ບຸນຄຸນມາຍັງ ຄະນະອາຈານຜູ້ຊ່ວຍແນະນໍາໃນການເຮັດບົດ ວິທະຍານິພົນ ຂອງຂ້າພະເຈົ້າຈົນປະສົບຜົນສໍາເລັດ.

ຂ້າພະເຈົ້າຂໍສະແດງຄວາມນັບຖື ແລະ ຮັກແພງມາຍັງອໍານາດການປົກຄອງ ເມືອງ ຈໍາປາສັກ ແລະ ບ້ານທີ່ກ່ຽວຂ້ອງ ທີ່ໃຫ້ຄວາມຮ່ວມມືໃນການ ສໍາຫຼວດ ແລະ ລົງເກັບກໍາຂໍ້ມູນ.

ທ້າຍນີ້ຂໍອວຍພອນໄຊ ອັນປະເສີດ ມາຍັງ ບັນດາທ່ານຈົ່ງມີແຕ່ຄວາມສຸກກາຍສະບາຍໃຈ, ສົມ ຫວັງໃນໜ້າທີ່ການງານມີສຸຂະພາບພາລານາໄມ ແຂງແຮງ ແລະ ປາຖະໜາສິ່ງໃດຂໍໃຫ້ໄດ້ດັ່ງໃຈ ປາຖະໜາດ້ວຍເຖີດ.

## 7. ເອກະສານອ້າງອີງ.

ຈິງຮັກ ອິນທະຍົນ. (2002). ການມີສ່ວນຮ່ວມຂອງ ປະຊາຊົນ ໃນການຈັດການການທ່ອງທ່ຽວ: ກໍລະນີສຶກສາ ບ້ານ ໂປ່ງຮ້ອນ ຕໍາບົນໃໝ່ ພັດທະນາ ອໍາເພີເກາະຄາຈັງຫວັດລໍາປາງ. ມະຫາວິທະຍາໄລຊຽງ ໃໝ່: ຊຽງໃໝ່ DOI: https://doi.nrct.go.th/ListDoi/listDetail?Resolve_DOI=10.14457/ CM U.the.2002.110

ສຸດຊີວັນ ນັນທະວັນ ແລະ ອາຍຸດທະຍາ. (2008). "ການຈັດການການທ່ອງທ່ຽວທາງ ວັດທະນະທໍາໂດຍຊຸມຊົນເປັນສູນກາງ" ການ ຄົ້ນຄວ້າແບບອິດສະຫຼະ, ສິລະປະສາດຕົນ ມະຫາບັນດິດ, ມະຫາວິທະຍາ ໄລ ຊຽງໃໝ່.

ສິນທຸ ສະໂລບົນ. (2003). ການທ່ອງທ່ຽວໂດຍຊຸມ ຊົນແນວຄິດ ແລະ ປະສົບການພື້ນທີ່ພາກເ ໜືອ, ໂຄງ ການປະສານງານ ແລະ ພັດທະນາ ເຄືອຄ່າຍການທ່ອງທ່ຽວ ແລະ ຊຸມຊົນ ສໍານັກງານກອງທຶນ. ສະໜັບສະໜູນການ ວິໄຈ. ສໍານັກງານພາກ. ພິມຄັ້ງທີ 1, ຈັງຫວັດ ຊຽງໃໝ່: ວິນດາເພຣສ.

ອາຄົມ ລະພີພັດ. (2004). ການມີສ່ວນຮ່ວມ ຂອງ ຊຸມຊົນໃນການພັດທະນາຊຸມຊົນ ໃນສະພາບ ສັງຄົມ ແລະ ວັດທະນາທໍາ. ປະເທດໄທ. ສູນ ການສຶກສານະໂຍບາຍສາທາລະນະສຸກ ມະຫາວິທະຍາໄລມະຫິດົນ.

ວາດສະໜາ ສາດາລັກ. (2014). ການມີສ່ວນຮ່ວມ ໃນການພັດທະນາທ້ອງຖິ່ນ ຂອງປະຊາຊົນ ອໍາເພີບາງນໍ້າປຽວ ຈັງຫວັດສະເຊີງເຊົາ. (ວິທະຍານິພົນປະລິນຍາມະຫາບັນດິດ) ມະຫາວິທະຍາໄລລະຊະພັດ ລະຊະນະຄະ ຫຼິນ.

*Likert*, R. (*1932*). A technique for the measurement of attitudes. Archives

of Psychology, 22 140, 55. Abstract. The project conceived in 1929 by

Oakley. (1984). P Approaches to Participation in Rural Development. Geneva : Interna tional Office.

Reeder, W.W. (1974). Loms aspects of the informal social participation of farm families in New York State.Doctoral dissertation, Cornell University.

Stavenhagen, R. Marginally Participation agrarian structure in latinamerica. bulletin of the international institute of labour studies no.30.geneva: IIL.S.

United Nations. (1981). Popular participation as a strategy for promoting community - level action and national development. New York: United Nations.

Walt W. Rostow. (1960). The stages of Economic Growth: A Non – Communist Man ifesto .

William E.. (1976). Participation management: Concept theory and implementation. Journal Atlanta G.: Georgia State University.

World Health Organization (WHO). 1978. Primart health care Report of the Inter national Conference on Primary Health Care, Alma Ata, 6-12 September 1978 Geneva : WHO.

*World Health Organization* ( *WHO*). *1978.* Primary health care Report of the Intern ational. Conference on Primary Health Care, Alma Ata, 6-12 September

Yamanae, T. 1973. Statistice : An Introduction Analysis. Harper International Edu cation. Singapore : Times Frinters Sdn. Phd.